DWD INDIANA DEPARTMENT OF WORKFORCE DEVELOPMENT

# ບັນທຶກການຊອກວຽກຂອງ UI

ຍິນດີຕ້ອນຮັບສູ່ການແນະນຳບັນທຶກກິດຈະກຳການຊອກວຽກເຮັດຂອງ UI.

ພະແນກພັດທະນາແຮງງານ, ຍັງເອີ້ນວ່າແມ່ນ “DWD” ມີໜ້າທີ່ຮັບຜິດຊອບໃນການ ບໍລິຫານສະຫວັດດີການການປະກັນໄພດ້ານການຫວ່າງງານ ແລະ ຮັບຮອງວ່າຜູ້ຮຽກຮ້ອງສິດປະຕິບັດຕາມຂໍ້ກຳນົດທັງໝົດແລ້ວ, ລວມທັງການຊອກວຽກເຮັດ




ສ່ວນທີ່ຈຳເປັນຂອງສະຫວັດດີການດ້ານການຫວ່າງງານແມ່ນການຊ່ວຍເຫຼືອທ່ານໃຫ້ສາມາດກັບຄືນໄປເຮັດວຽກໄດ້ເຕັມເວລາ. ເພື່ອຮັກສາສິດ, ທ່ານຕ້ອງເຮັດໃຫ້ແລ້ວກິດຈະກຳການຊອກວຽກເຮັດຢ່າງໜ້ອຍສອງຄັ້ງໃນແຕ່ລະອາທິດ ແລະ ເກັບລາຍລະອຽດຂອງກິດຈະກຳເຫຼົ່ານັ້ນ.

RESEA ແມ່ນໂຄງການໃຫ້ໂອກາດເທົ່າທຽມກັນ. ບຸກຄົນພິການຈະໄດ້ຮັບບໍລິການຊ່ວຍເຫຼືອ ແລະ ບໍລິການເສີມຟຼີຕາມຄຳຂໍ. ສຳລັບເຄື່ອງໂທພິມ, ກົດ: 1-800 743-3333
ການບໍລິການຕ່າງໆໃນການແປພາສາ ແລະ ການແປເອກະສານຟຼີຍັງມີຫາກຂໍມາ.




ໃນໃບຮັບຮອງປະຈຳອາທິດຂອງທ່ານ, ທ່ານຢືນຢັນວ່າ ທ່ານໄດ້ເຮັດສຳເລັດກິດຈະກຳການຊອກວຽກເຮັດສອງຄັ້ງ ລະຫວ່າງອາທິດ. ກິດຈະກຳການຊອກວຽກເຮັດທີ່ເໝາະສົມແມ່ນກິດຈະກຳທີ່ຊ່ວຍໃຫ້ທ່ານໄດ້ວຽກເຕັມຊົ່ວໂມງ ຫຼື ເຮັດໃຫ້ທ່ານໄດ້ໜ້າທີ່ຕຳແໜ່ງທີ່ດີກວ່າໃນການຊອກວຽກເຕັມເວລາ

ກິດຈະກຳການຊອກວຽກເຮັດລວມມີ:

- ການກະກຽມຄວາມພ້ອມໃນການເຮັດວຽກ ແລະ ກິດຂະກຳການສ້າງເຄືອຂ່າຍ
- ກິດຈະກຳການຕິດຕໍ່ນາຍຈ້າງ
- ກິດຈະກຳໃນ WorkOne

- ກິດຈະກຳອອນໄລນ໌

ສອງສາມສະໄລຖັດໄປຈະອະທິບາຍກ່ຽວກັບປະເພດຂອງກິດຈະກຳເຫຼົ່ານີ້ລະອຽດເພີ່ມເຕີມ.



ການກະກຽມຄວາມພ້ອມໃນການເຮັດວຽກ ແລະ ກິດຂະກຳການສ້າງເຄືອຂ່າຍ ລວມມີ:

- ສ້າງປະຫວັດຫຍໍ້
- ສ້າງຈົດໝາຍສະໝັກງານ
- ສ້າງ/ອັບເດດບັນຊີ LinkedIN ຫຼື ບັນຊີໃນເວບໄຊເຄືອຂ່າຍມືອາຊີບອື່ນໆ
- ເຂົ້າຮ່ວມງານສະແດງອາຊີບ/ງານ

# ສ້າງເຄືອຂ່າຍ




ກິດຈະກຳການຕິດຕໍ່ນາຍຈ້າງ ລວມມີ:

•ການຍື່ນໃບສະໝັກງານສຳລັບນາຍຈ້າງທີ່ມີ, ຫຼື ຄາດວ່າຈະມີ, ການເປີດຮັບສະໝັກງານ
•ການຕິດຕາມການແນະນຳວຽກ ຫຼື ຄວາມພະຍາຍາມໃນການພັດທະນາວຽກຕາມທີ່ພະນັກງານຂອງລັດ ຫຼື ທ່ານໜ້າທີ່ປະບັນໄພດ້ານການຫວ່າງງານແນະນຳ
•ຕິດຕໍ່ ຫຼື ເຂົ້າພົບນາຍຈ້າງທີ່ມີ, ຫຼື ຄາດວ່າຈະມີ, ການເປີດຮັບສະໝັກວຽກດ້ວຍຕົວເອງ.
•ສຳພາດວຽກ
•ການຕິດຕາມວຽກ




ກິດຈະກຳໃນ WorkOne ລວມມີ:

- ເຂົ້າຮ່ວມການປະຖົມນິເທດຂອງ WorkOne (ການບໍລິການການຈ້າງງານຄືນໃໝ່)
- ສ້າງແຜນການຈ້າງງານຄືນໃໝ່ທີ່ WorkOne
- ເຂົ້າຮ່ວມການສຳພາດວຽກເບື້ອງຕົ້ນຂອງ WorkOne ຫຼື ກອງປະຊຸມການຕິດຕາມຜົນ
- ເຮັດໃຫ້ສຳເລັດງານຝຶກອົບຮົມເຊີງປະຕິບັດຂອງ WorkOne
- ເຮັດໃຫ້ສຳເລັດການປະເມີນ/ການທົດສອບ (TABE,

Accuplacer, WorkKeys ແລະ ອື່ນໆອີກ.)

- ສະໝັກ ຫຼື ເຂົ້າຮ່ວມໃນການຈ້າງງານ ແລະ ບໍລິການຝຶກອົບຮົມທີ່ຈັດຂຶ້ນໂດຍໂຄງການຜູ້ຮ່ວມມືທີ່ WorkOne



ກິດຈະກຳໃນອອນໄລນ໌ ລວມມີ:

•ອັບໂຫຼດປະຫວັດຫຍໍ້ຂອງທ່ານໄປທີ່ Indiana Career Connect
•ລົງທະບຽນເພື່ອຊອກວຽກກັບ Indiana Career Connect
•ກົດໄປທີ່ Pivot, ຊຶ່ງເປັນເຄື່ອງມືສຳລັບແຮງງານໃນອິນເດຍນາ, ໃນ CSS
•ຊອກຫາວຽກໃນອອນໄລນ໌ (Indiana Career Connect, Indeed, LinkedIn, Monster ແລະ ອື່ນໆ.)
•ເຮັດໃຫ້ສຳເລັດການປະເມີນທີ່ກ່ຽວຂ້ອງກັບວຽກ (ຜ່ານ Indiana Career Connect, Indiana Career Explorer ແລະ ອື່ນໆ.)
•ຄົ້ນຫາຂໍ້ມູນກ່ຽວກັບຕະຫຼາດແຮງງານ
•ເຮັດໃຫ້ສຳເລັດງານຝຶກອົບຮົມເຊີງປະຕິບັດໃນອອນໄລນ໌




DWD ກຳນົດໃຫ້ທ່ານເກັບຮັກສາລາຍລະອຽດສຳລັບກິດຈະກຳການຊອກວຽກເຮັດທີ່ທ່ານໄດ້ເຮັດສຳເລັດໃນແຕ່ລະອາທິດ. ທ່ານອາດຈະໃຊ້ບັນທຶກກິດຈະກຳການຊອກວຽກເຮັດທີ່ມີໃນ https://www.in.gov/dwd/indiana-unemployment/individuals/work-search/.

ທ່ານອາດຈະປະກອບແບບຟອມທາງອີເລັກໂທຼນິກ ແລະ ພິມອອກມາ ແລະ ບັນທຶກໄວ້ໃນອຸປະກອນຂອງທ່ານໄວ້. ນອກຈາກນັ້ນ, ທ່ານຍັງສາມາດພິມບັນທຶກອອກມາ ແລະ ຂຽນແບບຟອມນີ້ດ້ວຍມືໄດ້.

ທ່ານຕ້ອງຕິດຕາມຂໍ້ມູນນີ້ສໍາລັບແຕ່ລະກິດຈະກໍາທີ່ທ່ານເຮັດສໍາເລັດ:

- ກິດຈະກໍາ
- ວັນທີທີ່ເຮັດກິດຈະກໍາສໍາເລັດ
- ກິດຈະກໍາ ຫຼື ຊື່ຂອງນາຍຈ້າງ
- ສະຖານທີ່ຂອງກິດຈະກໍາ ຫຼື ນາຍຈ້າງ
- ຂໍ້ມູນຕິດຕໍ່ສໍາລັບກິດຈະກໍາ ຫຼື ນາຍຈ້າງ
    - ຊື່
    - ເບີໂທລະສັບ
    - ອີເມວ
    - ລິງເວັບໄຊຕ໌




DWD ອາດຂໍກວດສອບ ແລະ ຢືນຢັນກິດຈະກຳການຊອກວຽກເຮັດຂອງທ່ານໄດ້ຕະຫຼອດເວລາລະຫວ່າງການຮຽກຮ້ອງຂອງທ່ານ. ຫາກພົບເຫັນວ່າກິດຈະກຳຂອງທ່ານບໍ່ສຳເລັດ ຫຼື ບໍ່ຖືກຕ້ອງ, ສະຫວັດດີການຂອງທ່ານອາດຖືກປະຕິເສດ. ທ່ານຈຳເປັນຕ້ອງໄດ້ສະແດງບັນທຶກຂອງອາທິດຜ່ານມາ ເມື່ອທ່ານໄດ້ກຳນົດເວລາໃຫ້ປາກົດຕົວດ້ວຍຕົວເອງທີ່ **ສູນບໍລິການວຽກເຮັດຂອງ WorkOne** ສຳລັບ ບໍລິການການຈ້າງງານຄືນໃໝ່ .

ບັນທຶກບັນທຶກການຊອກວຽກເຮັດທັງໝົດໄວ້, ອີເມວຢືນຢັນ ຫຼື ເອກະສານເປັນເວລາ ຫົກ (6) ເດືອນຫຼັງຈາກ

ກິດຈະກຳການຊອກວຽກເຮັດໄດ້ເກີດຂຶ້ນເພື່ອຢືນຢັນ
ກິດຈະກຳການຊອກວຽກເຮັດຂອງທ່ານ.




**WorkOne ແມ່ນໂຄງການ/ນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນ.**
ຈະໄດ້ຮັບບໍລິການຊ່ວຍເຫຼືອ ແລະ ບໍລິການເສີມຟຣີຕາມຄຳຂໍ.
ນອກຈາກນັ້ນ, ບໍລິການແປພາສາຍັງບໍ່ມີຄ່າໃຊ້ຈ່າຍ.

**ຫາກທ່ານຄິດວ່າເຈົ້າຖືກເລືອກປະຕິບັດ**
**ທ່ານອາດຈະຍື່ນຄຳຮ້ອງທຸກພາຍໃນ 180 ວັນນັບຈາກວັນທີ່ຖືກລະເມີດ.**

ຕິດຕໍ່ຫາທ່ານໜ້າທີ່ EO ໃນທ້ອງຖິ່ນຂອງທ່ານຜ່ານຫ້ອງການຂອງ WorkOne ໃນທ້ອງຖິ່ນຂອງທ່ານ.

ຫຼື ສົ່ງຄຳຮ້ອງທຸກໄປທີ່:

Director, Civil Rights Center (CRC)
U.S. Department of Labor
200 Constitution Avenue NW
Room N- 4123, Washington, DC 20210

**ຫາກທ່ານມີຄຳຖາມກ່ຽວກັບ RESEA ກ່ຽວກັບເນື້ອຫາໃນວິດີໂອນີ້ ແລະ ທ່ານບໍ່ສາມາດຄົ້ນຫາຄຳຕອບໄດ້ໃນໜ້າເວບຂອງ DWD, ກະລຸນາຖາມຜູ້ນຳທາງບໍລິການການຈ້າງງານລະຫວ່າງກອງປະຊຸມໜຶ່ງຕໍ່ໜຶ່ງຂອງທ່ານທີ່ຈະມາເຖິງນີ້.**



in.gov/dwd/indiana-unemployment/resea

INDIANA DEPARTMENT OF WORKFORCE DEVELOPMENT

ຫາກທ່ານມີຄຳຖາມກ່ຽວກັບເນື້ອຫາໃນວິດີໂອນີ້ ແລະ ທ່ານບໍ່ສາມາດຄົ້ນຫາຄຳຕອບໄດ້ໃນໜ້າເວບຂອງ DWD, ກະລຸນາຖາມຜູ້ນຳທາງບໍລິການການຈ້າງງານລະຫວ່າງກອງປະຊຸມໜຶ່ງຕໍ່ໜຶ່ງຂອງທ່ານທີ່ຈະມາເຖິງນີ້.




ທ່ານໄດ້ເຮັດສຳເລັດວິດີໂອຂອງ WorkOne ທີ່ຈຳເປັນອັນທີ່ 2 ແລ້ວ, ຊຶ່ງກ່ຽວກັບບັນທຶກການຊອກວຽກເຮັດຂອງ UI. ກະລຸນາເບິ່ງວິດີໂອບັງຄັບອັນທີສາມ, ລະບົບການແລກປ່ຽນແຮງງານຂອງ Indiana Career Connect.